# ມີເກ

## ຄົນບ້ານນອກ

| | |
|---|---|
| ໃຈຄວາມສຳຄັນ | ຟ້ອງ |
| ຂໍ້ຄວາມສຳຄັນ | ໗:໑໘ |
| ຈຳນວນບົດ | ໗ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ໗໔໐ ຈົນເຖິງ ໗໒໒ ກ່ອນ ຄ.ສ. |
| ປະຈຳປຸ່ທີ້ | ຢູດາ |
| ມີເກແປວ່າ | ບໍ່ມີໃຜເໝືອນພຣະເຢໂຮວາ |
| ຜູ້ທຳນວາຍຄົນທີ | ໗ |

### ໑. ວ່າດ້ວຍຊີວິດແລະຄາວສະໄໝຂອງມີເກ

ເອຊາອີເປັນຜູ້ທຳນວາຍຢູ່ໃນພຣະຣາຊວັງ ສ່ວນມີເກເປັນຄົນທຳນວາຍຢູ່ບ້ານນອກ ເພິ່ນເປັນຄົນບ້ານໂມຣາຊິດ ໄດ້ເປັນຜູ້ທຳນວາຍໃນສະໄໝຂອງກະສັດໂຢທາມ ກະສັດອາກາເຊແລະກະສັດເອເຊເກັຍເຊ ເພິ່ນເປັນຄົນໃນຄາວດຽວກັນກັບອາໂມດ ແລະ ໂອເຊຜູ້ທຳນວາຍໃນຣາຊອານາຈັກຊາມາຣີແລະເປັນຄົນໃນຄາວດຽວກັນກັບເອຊາອີຜູ້ທຳນວາຍໃນຣາຊອານາຈັກເຢຣູຊາເລັມ ແຕ່ມີເກຄົນດຽວທີ່ໄດ້ທຳນວາຍແລະບົວຣະບັດຢູ່ໃນສອງອານາຈັກຄືໃນອານາຈັກຊາມາຣີແລະເຢຣູຊາເລັມ ຄຳສອນສ່ວນຫລາຍຂອງເພິ່ນກໍເປັນເຊັ່ນດຽວກັນກັບຂອງເອຊາອີ

## ໒. ວ່າດ້ວຍເນື້ອຄວາມ

໑. ມີເກໄດ້ເວົ້າເຣື່ອງບາບ ແລະ ການອະທັມ ຂອງ ພວກອິສຣາ-ເອັນດ້ວຍຄວາມກ້າຫານ (ມີ:໓) ເພິ່ນເວົ້າວ່າບໍ່ວ່າຜູ້ນ້ອຍຜູ້ໃຫຍ່ບໍ່ວ່າພວກປະໂລຫິດຫລືຜູ້ທຳນວາຍລ້ວນແຕ່ມີບາບແລະເຮັດການບໍ່ສັດຊື່

໒. ມີເກທຳນວາຍວ່າ

ເມືອງຊາມາຣີຈະຖືກທຳລາຍ (໑:໖) ແລະເມືອງເຢຣູຊາ-ເລັມຈະຖືກກວາດຕ້ອນໄປທີ່ເມືອງບາບີໂລນ

(ມີ:໑໙;໔.໑໐)

໓. ມີຄຳທຳນວາຍເຖິງພຣະເມຊີອາ

ກ. ພຣະເມຊີອາຈະເກີດທີ່ເມືອງເບດເລເຫມ (໕:໑)

ຂ. ການ ສເວີຍ ຣາຊ ຂອງ ພຣະ ເມ ຊີ ອາ ໃນ ພາຍ ໜ້າ (໕:໑–໕; ເອຊາອີ ໙:໙–໕) ເວລາພຣະເຈົ້າຊົງຫ້ອມໂຮມພວກຂອງພຣະອົງໄວ້ແລ້ວ (໕:໕–໖)

໔. ບົດທີ ໖ ກັບບົດທີ ໗ ເວົ້າເຖິງຄະດີຂອງພຣະເຢໂຮວາກັບພັກພວກຂອງພຣະອົງ

໕. ມີເກໄດ້ເວົ້າເຖິງການທີ່ພຣະອົງຊົງເປັນຜູ້ຍົກໂທດໃຫ້ພວກເຮົາ ຜູ້ຊົງເຕັມໄປດ້ວຍຄວາມເມດຕາ ແລະ ຊົງຫລົງລືມຄວາມອະທັມຂອງພວກເຮົາ

## ຂ. ການຈັດເປັນບົດ

ບົດ ໑–໓ ບາບ ແລະ ໂທດຂອງເມືອງຊາມາຣີ ແລະ ຂອງເມືອງ ເຢຣູຊາເລັມ

ບົດ ໔–໕ ຄວາມລອດພົ້ນດ້ວຍ ເມຊີອາ ຈະມີແກ່ຄົນທັງປວງ

ບົດ ໖–໗ ພຣະເຈົ້າຈະຕັດສິນຄວາມແລະຍົກຜິດບາບໂທດ